# ທະນາຄານ ຮ່ວມພັດທະນາ ຈຳກັດ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງທະນາຄານຮ່ວມພັດທະນາ ຈຳກັດ ("ທະນາຄານ") ມີຄວາມຍິນດີນຳສະເໜີບົດລາຍງານການເງິນຂອງທະນາຄານ ປະຈຳປີ ວັນທີ 31 ທັນວາ 2012.

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບບົດລາຍງານການເງິນ**

ຄະນະບໍລິຫານການຂອງທະນາຄານ ແມ່ນມີຄວາມຮັບຜິດຊອບໃນການກະກຽມບົດລາຍງານການເງິນຂອງແຕ່ລະປີການບັນຊີ ໃຫ້ຖືກຕ້ອງຕາມຄວາມເປັນຈິງຂອງທະນາຄານ, ຜົນປະກອບການ ແລະ ກະແສເງິນສົດປະຈຳປີ ໂດຍສອດຄ່ອງກັບກົດໝາຍການບັນຊີ ແລະ ກົດລະບຽບການບັນຊີອື່ນໆທີ່ວາງອອກໂດຍ ທຫລ. ໃນການກະກຽມບົດລາຍງານການເງິນດັ່ງກ່າວ ຄະນະບໍລິຫານຂອງທະນາຄານຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົາບັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ພິຈາລະນາບັນດາລາຍການຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫລງການວ່າບັນດາມາດຕະຖານການບັນຊີທີ່ເໝາະສົມໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫລື ຂໍ້ແຕກຕ່າງທີ່ສຳຄັນໃນທາງປະຕິບັດຕໍ່ກັບມາດຕະຖານການບັນຊີ ຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍຢູ່ໃນບົດລາຍງານການເງິນ; ແລະ
- ກະກຽມບົດລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ທະນາຄານຫາກຕັ້ງຂໍ້ສົມມຸດຖານ ຫລື ຄາດຄະເນວ່າທະນາຄານຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຂອງທະນາຄານຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງ ເຊິ່ງໄດ້ເປີດເຜີຍຖານະການເງິນຂອງທະນາຄານຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້ຢູ່. ຄະນະບໍລິຫານຂອງທະນາຄານຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງທະນາຄານ ແລະ ດ້ວຍເຫດນັ້ນຕ້ອງມີຂັ້ນຕອນທີ່ເໝາະສົມ ເພື່ອປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂອງທະນາຄານຂໍຢັ້ງຢືນວ່າ ທະນາຄານໄດ້ປະຕິບັດຕາມຂໍ້ກຳນົດທີ່ກ່າວມາຂ້າງເທິງນັ້ນ ໃນການກະກຽມບົດລາຍງານການເງິນ ປະຈຳປີ ວັນທີ 31 ທັນວາ 2012.

**ຖະແຫລງການຂອງຄະນະບໍລິຫານ**

ຄະນະບໍລິຫານຂອງທະນາຄານມີຄວາມຍິນດີຖະແຫລງວ່າ ບົດລາຍງານການເງິນແມ່ນໄດ້ສະແດງພາບພົດອັນຖືກຕ້ອງ ແລະ ມີຄວາມຍຸດຕິທຳ ກ່ຽວກັບຖານະການເງິນຂອງທະນາຄານ ນະວັນທີ 31 ທັນວາ 2012, ຜົນການດຳເນີນງານຂອງທະນາຄານ ແລະ ກະແສເງິນສົດປະຈຳປີ ອີງຕາມກົດໝາຍການບັນຊີວິສາຫະກິດຂອງ ສປປ ລາວ ແລະ ລະບຽບການບັນຊີທີ່ກ່ຽວຂ້ອງ ທີ່ກຳນົດໂດຍ ທຫລ.

ຕາງໜ້າ ແລະ ໃນນາມຄະນະບໍລິຫານ:

ທ່ານ [illegible]ເລີນ ເຄນມິ່ງມົງຄົນ
ຜູ້ອຳນວຍການໃຫຍ່
ນະຄອນຫລວງວຽງຈັນ, ສປປ ລາວ
31 ມີນາ 2013

ERNST & YOUNG

Ernst & Young Lao Limited
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : + 856 21 455 077
Fax: + 856 21 455 078
www.ey.com

ເລກທີອ້າງອີງ. 60956549/15392648

ບົດລາຍງານຂອງຜູ້ກວດສອບເອກະລາດ

ເຖິງ: ສະພາບໍລິຫານຂອງທະນາຄານຮ່ວມພັດທະນາ ຈຳກັດ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບບົດລາຍງານການເງິນຂອງທະນາຄານຮ່ວມພັດທະນາ ຈຳກັດ("ທະນາຄານ") ດັ່ງທີ່ໄດ້ລະບຸໄວ້ແຕ່ໜ້າ 7 ຫາ 41 ເຊິ່ງປະກອບດ້ວຍ ໃບສະຫລຸບຊັບສົມບັດ ນະວັນທີ 31 ທັນວາ 2012, ໃບລາຍງານຜົນໄດ້ຮັບ, ໃບລາຍງານການປ່ຽນແປງຂອງທຶນ ແລະ ໃບລາຍງານກະແສເງິນສົດ ປະຈຳປີ ແລະ ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ ແລະ ເອກະສານຊ້ອນທ້າຍບົດລາຍງານການເງິນ.

## ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ບົດລາຍງານການເງິນ

ຄະນະບໍລິຫານຂອງທະນາຄານ ແມ່ນມີຄວາມຮັບຜິດຊອບໃນການກະກຽມ ແລະ ນຳສະເໜີບົດລາຍງານການເງິນໃຫ້ຖືກຕ້ອງ ໂດຍສອດຄ່ອງກັບກົດໝາຍການບັນຊີ, ລະບຽບການບັນຊີອື່ນໆທີ່ວາງອອກໂດຍ ທຫລ ແລະ ການຄວບຄຸມພາຍໃນທີ່ກ່ຽວຂ້ອງໃນການສ້າງ ແລະ ນຳສະເໜີບົດລາຍງານການເງິນທີ່ຖືກຕ້ອງ ເຊິ່ງປາສະຈາກຂໍ້ຜິດພາດອັນໃຫຍ່ຫລວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ.

## ຄວາມຮັບຜິດຊອບຂອງຜູ້ກວດສອບ

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນອອກຄຳເຫັນຕໍ່ກັບບົດລາຍງານການເງິນເຫລົ່ານີ້ ບົນພື້ນຖານຜົນການກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການກວດສອບ ໂດຍສອດຄ່ອງກັບມາດຕະຖານການກວດສອບສາກົນ. ມາດຕະຖານເຫລົ່ານັ້ນຮຽກຮ້ອງໃຫ້ພວກຂ້າພະເຈົ້າປະຕິບັດຕາມຂໍ້ບັນຍັດດ້ານຈັນຍາບັນ, ວາງແຜນ ແລະ ດຳເນີນການກວດສອບ ເພື່ອໃຫ້ໄດ້ຮັບຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າ ບົດລາຍງານການເງິນແມ່ນປາສະຈາກຄວາມຜິດພາດອັນໃຫຍ່ຫລວງ.

ການກວດສອບລວມມີກຳມະວິທີຕ່າງໆ ເພື່ອເກັບກຳຫລັກຖານຢັ້ງຢືນຄວາມຖືກຕ້ອງຂອງຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນໃນບົດລາຍງານການເງິນ. ກຳມະວິທີການທີ່ນຳໃຊ້ໃນການກວດສອບແມ່ນຂຶ້ນກັບການວິນິໄສຂອງຜູ້ກວດສອບ ລວມເຖິງການປະເມີນລະດັບຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫລວງຂອງບົດລາຍງານການເງິນ ບໍ່ວ່າຈະແມ່ນຍ້ອນການສໍ້ໂກງ ຫລື ຄວາມຜິດພາດຕ່າງໆ. ໃນການປະເມີນຄວາມສ່ຽງດັ່ງກ່າວ ຜູ້ກວດສອບຈະພິຈາລະນາບັນດາການຄວບຄຸມພາຍໃນ ທີ່ກ່ຽວຂ້ອງກັບການສ້າງ ແລະ ການນຳສະເໜີບົດລາຍງານການເງິນຂອງທະນາຄານ ເພື່ອອອກແບບກຳມະວິທີໃນການກວດສອບໃຫ້ແທດເໝາະກັບສະພາບການຕ່າງໆ ແຕ່ບໍ່ແມ່ນເພື່ອຈຸດປະສົງໃນການອອກຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ. ການກວດສອບນີ້ຍັງລວມການປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ນຳໃຊ້ຢູ່, ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີທີ່ຄະນະບໍລິຫານວາງອອກ, ພ້ອມກັນນັ້ນ ກໍ່ຍັງປະເມີນພາບລວມຂອງການນຳສະເໜີບົດລາຍງານການເງິນອີກດ້ວຍ.

ERNST & YOUNG

ພວກຂ້າພະເຈົ້າເຊື່ອວ່າຫລັກຖານທີ່ໄດ້ມາຈາກການກວດສອບນັ້ນ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

*ພື້ນຖານໃນການອອກຄຳເຫັນແບບມີເງື່ອນໄຂ*

ພວກຂ້າພະເຈົ້າໄດ້ເນັ້ນໜັກຄວາມສົນໃຈຕໍ່ກັບບັນຫາ ເຊິ່ງໄດ້ຖືກກວດພົບໃນລະຫວ່າງການກວດສອບ ດັ່ງລຸ່ມນີ້:

1. ນະວັນທີ 31 ທັນວາ 2012 ລວມຢູ່ໃນຊັບສິນອື່ນໆຂອງທະນາຄານ ແມ່ນເງິນລ່ວງໜ້າໃຫ້ບັດສິນເຊື່ອຕ່າງປະເທດ (credit card) ຈຳນວນທັງໝົດແມ່ນ 13,989,854,066 ກີບ. ເນື່ອງຈາກການບັນທຶກຂອງທະນາຄານ ພວກຂ້າພະເຈົ້າຈຶ່ງບໍ່ສາມາດດຳເນີນການກວດສອບດ້ວຍວິທີການອື່ນ ເພື່ອໃຫ້ໄດ້ຫລັກຖານທີ່ພຽງພໍເພື່ອຮັບປະກັນເຖິງຄວາມມີຈິງ, ການປະເມີນຄ່າ ແລະ ຄວາມຄົບຖ້ວນຂອງຈຳນວນເງິນດັ່ງກ່າວ. ພວກຂ້າພະເຈົ້າຍັງບໍ່ສາມາດປະເມີນຜົນກະທົບຂອງຈຳນວນເງິນດັ່ງກ່າວຕໍ່ຖານະການເງິນ ແລະ ຜົນການດຳເນີນງານຂອງທະນາຄານ ປະຈຳປີ ວັນທີ 31 ທັນວາ 2012.

2. ນະວັນທີ 31 ທັນວາ 2012 ບັນຊີໜີ້ຕ້ອງສົ່ງພາຍໃນ ມູນຄ່າ 5,582,726,849 ກີບ ທີ່ຍັງບໍ່ທັນມີເອກະສານອ້າງອີງ. ເນື່ອງຈາກບໍ່ມີຂໍ້ມູນຄົບຖ້ວນ ພວກຂ້າພະເຈົ້າຍັງບໍ່ສາມາດປະເມີນຜົນກະທົບຂອງຈຳນວນເງິນດັ່ງກ່າວຕໍ່ຖານະການເງິນ ແລະ ຜົນການດຳເນີນງານຂອງທະນາຄານ ປະຈຳປີ ວັນທີ 31 ທັນວາ 2012.

3. ນະວັນທີ 31 ທັນວາ 2012 ພົບວ່າມີສ່ວນຜິດດ່ຽງ ຈຳນວນ 2,518,880,907 ກີບ ລະຫວ່າງຕາຕະລາງຊັບສົມບັດຄົງທີ່ ແລະ ຄ່າຫລຸ້ຍຫ້ຽນສະສົມຂອງຊັບສົມບັດຄົງທີ່ໃນໃບດຸນດ່ຽງ. ເນື່ອງຈາກບັນຫາໃນການບັນທຶກບັນຊີຂອງທະນາຄານ ພວກຂ້າພະເຈົ້າຈຶ່ງບໍ່ສາມາດຮອບຮວມຂໍ້ມູນໄດ້ຢ່າງພຽງພໍ ເພື່ອດຳເນີນການກວດສອບດ້ວຍວິທີການອື່ນ ເພື່ອຢັ້ງຢືນເຖິງການເກີດຂຶ້ນຈິງ ແລະ ຄວາມຄົບຖ້ວນຄ່າຫລຸ້ຍຫ້ຽນສະສົມຂອງຊັບສົມບັດຄົງທີ່.

*ຄຳເຫັນ*

ໃນຄຳເຫັນຂອງພວກຂ້າພະເຈົ້າ, ນອກຈາກຜົນກະທົບຂອງປະເດັນທີ່ໄດ້ລະບຸໃນວັກເງື່ອນໄຂຂ້າງເທິງນີ້, ບົດລາຍງານການເງິນໄດ້ສະແດງຖານະການເງິນອັນຖືກຕ້ອງຂອງທະນາຄານ ນະວັນທີ 31 ທັນວາ 2012, ຜົນການດຳເນີນງານທາງການເງິນ ແລະ ໃບລາຍງານກະແສເງິນສົດສຳລັບທ້າຍປີ ໂດຍສອດຄ່ອງກັບກົດໝາຍບັນຊີວິສາຫະກິດ ແລະ ກົດລະບຽບບັນຊີທີ່ທາງທະນາຄານແຫ່ງ ສປປ ລາວ ໄດ້ວາງອອກ.

Ernst & Young Lao Ltd

ນະຄອນຫລວງວຽງຈັນ, ສປປ ລາວ
31 ມີນາ 2013

## ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຜົນໄດ້ຮັບ
ປະຈຳປີ ວັນທີ 31 ທັນວາ 2012

| ລ.ດ | ລາຍການ | ເອກະສານ ຊ້ອນທ້າຍ | 2012 ກີບ | 2011 (ລາຍງານຄືນ) ກີບ |
|---|---|---|---|---|
| A. | ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ | | | |
| 1 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ | 3 | 29,166,618,582 | 27,013,717,221 |
| 1.1 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນລະຫວ່າງທະນາຄານ | | 2,022,800,132 | 1,807,149,634 |
| 1.2 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກລູກຄ້າ | | 26,633,366,394 | 24,828,022,592 |
| 1.3 | ດອກເບ້ຍຈາກພັນທະບັດ | | 510,452,056 | 378,544,995 |
| 2 | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ | 3 | (17,514,540,685) | (16,768,816,902) |
| 2.1 | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນລະຫວ່າງທະນາຄານ | | (56,752,705) | (9,486,896) |
| 2.2 | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນຈາກລູກຄ້າ | | (17,457,787,980) | (16,759,330,006) |
| B. | ລາຍຮັບດອກເບ້ຍ ແລະ ລາຍຮັບ ທີ່ຄ້າຍຄືກັນສຸດທິ | 3 | 11,652,077,897 | 10,244,900,319 |
| 3 | ລາຍຮັບຈາກການເຊົ່າຊື້ | | 37,572,334 | 21,689,388 |
| 4 | ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | 4 | 11,165,939,192 | 11,088,902,804 |
| 5 | ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | 4 | (5,082,400,746) | (4,854,891,902) |
| 6 | ກຳໄລສຸດທິ ຈາກຫລັກຊັບການຄ້າ | | 110,600,000 | - |
| 7 | ກຳໄລ/(ຂາດທຶນ) ຈາກການລົງທຶນຫລັກຊັບ | | - | - |
| 8 | ກຳໄລຈາກການຊື້ຂາຍເງິນຕາຕ່າງປະເທດ ແລະ ຄຳ | | 2,029,572,193 | 366,386,926 |
| II. | ລາຍຮັບສຸດທິ ຈາກການດຳເນີນງານ | | 19,913,360,870 | 16,866,987,535 |
| B | ລາຍຮັບ ແລະ ລາຍຈ່າຍອື່ນໆ | | | |
| 15 | ລາຍຮັບຈາກການດຳເນີນງານອື່ນໆ | 5 | 9,479,647,605 | 12,654,698,982 |
| 16 | ລາຍຈ່າຍບໍລິຫານທົ່ວໄປ | | (13,860,929,978) | (13,684,851,040) |
| 16.1 | ລາຍຈ່າຍເງິນເດືອນ ແລະ ອື່ນໆໃຫ້ພະນັກງານ | 6 | (7,769,649,364) | (7,647,193,483) |
| 16.2 | ລາຍຈ່າຍບໍລິຫານອື່ນໆ | 7 | (6,091,280,614) | (6,037,657,557) |
| 17 | ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ | | (6,490,757,506) | (6,126,049,917) |

## ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຜົນໄດ້ຮັບ (ຕໍ່)

ສຳລັບທ້າຍປີ ວັນທີ 31 ທັນວາ 2012

| *ລ.ດ* | *ລາຍການ* | *ເອກະສານ ຊ້ອນທ້າຍ* | *2012 ກີບ* | *2011 (ລາຍງານຄືນ) ກີບ* |
|---|---|---|---|---|
| 18 | ລາຍຈ່າຍອື່ນໆ ຈາກການດຳເນີນງານ | 8 | (7,614,777,395) | (2,149,938,749) |
| 19 | ຄ່າເສື່ອມສະເພາະສຸດທິ(ເກີດຂຶ້ນ)/ເກັບຄືນ ຄ່າເສື່ອມເງິນກູ້ | | 8,663,546,471 | (9,476,736,482) |
| 19.1 | ຄ່າເສື່ອມສະເພາະສຳລັບເງິນກູ້ ແລະ ເງິນລ່ວງໜ້າລູກຄ້າ | 13.2 | (20,468,426,472) | (17,357,460,849) |
| 19.2 | ເກັບຄືນຄ່າເສື່ອມເພາະສຳລັບໜີ້ເສຍ | 13.2 | 29,131,972,943 | 7,880,724,367 |
| C | ລາຍຮັບ/(ລາຍຈ່າຍ) ອື່ນໆ | | | |
| 20.1 | ລາຍຮັບອື່ນໆ | | 805,973 | 829,255 |
| 20.2 | ລາຍຈ່າຍອື່ນໆ | | - | (389,955) |
| III. | ລວມກຳໄລ/(ຂາດທຶນ) ທັງໝົດກ່ອນອາກອນ | | 10,090,896,040 | (1,915,450,371) |
| 23 | ລາຍຈ່າຍອາກອນກຳໄລ | 19 | (496,579,942) | (677,513,391) |
| IV. | ກຳໄລ/(ຂາດທຶນ) ຫລັງອາກອນ | | 9,594,316,098 | (2,592,963,762) |

ທ່ານ ນາງ ຈະເລີນ ເຄນມີ່ງມີງຄົນ
ຜູ້ອຳນວຍການໃຫຍ່

ທ່ານ ນາງ ວິໄລ ທິສະຫວັດດີ
ຮອງຜູ້ອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
31 ມີນາ 2013

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບສະຫລຸບຊັບສິນບັດ
ປະຈຳປີ ວັນທີ 31 ທັນວາ 2012

| ລຳດັບ | ຊັບສິນ | ເອກະສານ ຊ້ອນທ້າຍ | 31 ທັນວາ 2012<br>ກີບ | 31 ທັນວາ 2011 (ລາຍງານຄືນ)<br>ກີບ |
|---|---|---|---|---|
| I | ເງິນສົດ ແລະ ເງິນຝາກ ຢູ່ທະນາຄານກາງ "ທຫລ" | | 220,288,711,772 | 88,231,908,329 |
| 1 | ເງິນສົດໃນກຳມື | 9 | 43,638,520,214 | 36,381,573,847 |
| 2 | ເງິນຝາກກະແສລາຍວັນ | 10 | 98,062,967,862 | 10,005,051,987 |
| 3 | ເງິນຝາກມີກຳນົດ | 10 | 78,587,223,696 | 41,845,282,495 |
| II | ໜີ້ຕ້ອງຮັບຈາກທະນາຄານອື່ນ | 11 | 52,157,673,633 | 88,767,343,325 |
| 1 | ເງິນຝາກກະແສລາຍວັນ | 11.1 | 15,608,670,881 | 63,581,154,131 |
| 2 | ເງິນຝາກມີກຳນົດ | 11.2 | 18,000,000,000 | 25,000,000,000 |
| 3 | ເງິນຝາກປະຫຍັດ | 11.3 | 18,549,002,752 | 186,189,194 |
| IV | ລົງທຶນໃນຫລັກຊັບ | 12 | 6,300,000,000 | 4,300,000,000 |
| 1 | ການຊື້ຂາຍຫຼັກຊັບ | | 4,300,000,000 | 4,300,000,000 |
| 2 | ຫຼັກຊັບທີ່ຖືໄວ້ລໍຖ້າຂາຍ | | 2,000,000,000 | - |
| V | ເງິນກູ້ | 13 | 257,233,538,685 | 205,920,226,531 |
| VI | ການລົງທຶນໃນສະມາຄົມ | 14 | 1,608,302,000 | 1,608,302,000 |
| VIII | ຊັບສິນບັດຄົງທີ່ | 15 | 116,873,419,330 | 112,902,600,242 |
| 1 | ຊັບສິນບັດພວມກຳລັງກໍ່ສ້າງ | | 6,266,558,776 | 1,082,884,364 |
| 2 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 15.1 | 76,935,487,189 | 73,754,826,945 |
| 3 | ຊັບສິນບັດຄົງທີ່ມີຕົວຕົນ | 15.2 | 33,671,373,365 | 38,064,888,933 |
| X | ຊັບສິນອື່ນໆ | | 28,856,783,136 | 32,005,622,562 |
| 1 | ດອກເບ້ຍຄ້າງຮັບ | | 2,873,885,028 | 2,343,650,701 |
| 2 | ອື່ນໆ | 16 | 25,982,898,108 | 29,661,971,861 |
| | ລວມຊັບສິນ | | 683,318,428,556 | 533,736,002,989 |

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບສະຫຼຸບຊັບສິນບັດ (ຕໍ່)

ປະຈຳທ້າຍປີ 31 ທັນວາ 2012

| ລຳດັບ | ໜີ້ສິນ ແລະ ທຶນ | ເອກະສານຊ້ອນທ້າຍ | 31 ທັນວາ 2012<br>ກີບ | 31 ທັນວາ 2011<br>(ລາຍງານຄືນ)<br>ກີບ |
|---|---|---|---|---|
| I | **ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ** | | 2,384,912,998 | 1,781,998,190 |
| 1 | ເງິນຝາກກະແສລາຍວັນ | | 2,384,912,998 | 1,781,998,190 |
| II | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | 17 | 466,071,041,399 | 481,986,021,390 |
| 1 | ເງິນຝາກກະແສລາຍວັນ | | 314,109,290,148 | 329,024,830,237 |
| 2 | ເງິນຝາກມີກຳນົດ | | 151,953,751,251 | 152,947,283,378 |
| 3 | ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ | | 8,000,000 | 13,907,775 |
| V | **ໜີ້ສິນອື່ນໆ** | | 17,387,633,485 | 19,790,114,012 |
| 1 | ດອກເບ້ຍຄ້າງຈ່າຍ | | 3,907,381,736 | 4,015,474,460 |
| 2 | ໜີ້ຕ້ອງສົ່ງພາຍໃນ | | 5,582,726,849 | 10,879,754,219 |
| 3 | ໜີ້ຕ້ອງສົ່ງອື່ນໆ | 18 | 7,897,524,900 | 4,894,885,333 |
| | ລວມຍອດໜີ້ສິນ | | 485,843,587,882 | 503,558,133,592 |
| VI | ທຶນ ແລະ ຄັງສຳຮອງ | | | |
| 1 | ທຶນຈົດທະບຽນທີ່ຖອກແລ້ວ | 20 | 244,666,100,000 | 84,706,100,000 |
| 2 | ຄັງສະສົມຕາມລະບຽບການ | | 391,685,038 | 391,685,038 |
| 3 | ທຶນຂະຫຍາຍທຸລະກິດ | | 550,517,242 | 550,517,242 |
| 4 | ຄັງສຳຮອງໃນການຕີມູນຄ່າຄືນ | | 23,671,958,000 | 23,671,958,000 |
| 5 | ຄັງແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | 13.3 | 1,270,379,683 | 1,063,865,639 |
| 6 | ຂາດທຶນສະສົມ | | (73,075,799,289) | (80,206,256,522) |
| | ລວມທຶນ | | 197,474,840,674 | 30,177,869,398 |
| | ລວມຍອດໜີ້ສິນ ແລະ ທຶນ | | 683,318,428,556 | 533,736,002,989 |

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບສະຫຼຸບຊັບສິນບັດ (ຕໍ່)

ສຳລັບທ້າຍປີ ວັນທີ 31 ທັນວາ 2012

| ລຳດັບ | ລາຍການນອກໃບສະຫລຸບຊັບສິນບັດ | ເອກະສານ ຊ້ອນທ້າຍ | 31 ທັນວາ 2012 ກີບ | 31 ທັນວາ 2012 ກີບ |
|---|---|---|---|---|
| I | ຂໍ້ຜູກພັນ | | | |
| A | ຂໍ້ຜູກພັນທາງການເງິນ | | 57,955,000 | 250,189,000 |
| 1 | ຂໍ້ຜູກພັນທາງການເງິນໃຫ້ແກ່ທະນາຄານອື່ນ | | - | - |
| 2 | ຂໍ້ຜູກກພັນທາງການເງິນໃຫ້ແກ່ລູກຄ້າ | | 57,955,000 | 250,189,000 |
| B | ຂໍ້ຜູກພັນໃນການຮັບປະກັນ | | | |
| 1 | ຂໍ້ຜູກພັນໃນການຮັບປະກັນໃຫ້ແກ່ທະນາຄານອື່ນ | | - | - |
| 2 | ຂໍ້ຜູກພັນໃນການຮັບປະກັນໃຫ້ແກ່ລູກຄ້າ | | - | - |
| | ລວມຍອດຂໍ້ຜູກພັນ | | 57,955,000 | 250,189,000 |
| II | ຫລັກຊັບຄ້ຳປະກັນ ແລະ ການຈິດຈຳລອງ | | | |
| A | ຫລັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບເງິນກູ້ | | 774,831,253,920 | 377,779,674,705 |
| 1 | ຫລັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບເງິນກູ້ ໃຫ້ທະນາຄານອື່ນໆ | | - | - |
| 2 | ຫລັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບເງິນ ກູ້ໃຫ້ລູກຄ້າ | | 774,831,253,920 | 377,779,674,705 |
| B | ຫລັກຊັບຄ້ຳປະກັນ ແລະ ການ ຈິດຈຳນອງສຳລັບການຄ້ຳປະກັນ | | - | - |
| | ຫລັກຊັບຄ້ຳປະກັນ ແລະ ການຈິດຈຳນອງ | | 774,831,253,920 | 377,779,674,705 |

ທະນາຄານ ຮ່ວມພັດທະນາ ຈຳກັດ JOINT DEVELOPMENT BANK

ທ່ານ ທອງຈະເລີນ ເຕນມີ່ງມົງຄົນ
ຜູ້ອຳນວຍການໃຫຍ່
ນະຄອນຫລວງວຽງຈັນ, ສປປ ລາວ
31 ມີນາ 2013

ທ່ານ ນາງ ວິໄລ ທິສະຫວັດດີ
ຮອງຜູ້ອຳນວຍການ

## ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບທ້າຍປີໃນວັນທີ 31 ທັນວາ 2012

| | ທຶນຈົດທະບຽນທີ່ຖອກແລ້ວ ກີບ | ຄັງສະສົມຕາມລະບຽບການ ກີບ | ຄັງສຳຮອງທີ່ປະເມີນຄືນ ກີບ | ຄັງແຮທົ່ວໄປສຳລັບກິດຈະກຳສິນເຊື່ອ ກີບ | ຂາດທຶນສະສົມ ກີບ | ລວມ ກີບ |
|---|---|---|---|---|---|---|
| **ຍອດເຫຼືອນະວັນທີ 01 ມັງກອນ 2011** | 84,706,100,000 | 391,685,038 | 550,517,242 | 887,787,995 | (77,613,292,760) | 8,922,797,515 |
| ກຳໄລສຸດທິພາຍໃນປີ (ປັບປຸງຄືນໃໝ່) | - | - | - | - | (2,592,963,762) | (2,592,963,762) |
| ການເພີ່ມຂຶ້ນຂອງຄັງແຮທົ່ວໄປສຳລັບໜີ້ເສຍພາຍໃນປີ (ປັບປຸງຄືນໃໝ່) | - | - | - | 203,015,236 | - | 203,015,236 |
| ສ່ວນຜິດດ່ຽງຂອງການແລກປ່ຽນເງິນຕາຕ່າງປະເທດ | - | - | - | (26,937,592) | - | (26,937,592) |
| **ຍອດເຫຼືອນະວັນທີ 01 ມັງກອນ 2011 (ປັບປຸງຄືນໃໝ່)** | 84,706,100,000 | 391,685,038 | 550,517,242 | 1,063,865,639 | (80,206,256,522) | 6,505,911,397 |
| ທຶນຖອກເພີ່ມພາຍໃນປີ (ເອກະສານຊ້ອນທ້າຍທີ 20) | 159,960,000,000 | - | - | - | - | 159,960,000,000 |
| ກຳໄລສຸດທິພາຍໃນປີ | | - | - | - | 9,594,316,089 | 9,594,316,089 |
| ການເພີ່ມຂຶ້ນຂອງຄັງແຮທົ່ວໄປສຳລັບໜີ້ເສຍ (ເອກະສານຊ້ອນທ້າຍ 13.3) | - | - | - | 197,154,344 | - | 197,154,344 |
| ສ່ວນຜິດດ່ຽງຂອງການແລກປ່ຽນເງິນຕາຕ່າງປະເທດ (ເອກະສານຊ້ອນທ້າຍ 13.3) | - | - | - | 9,359,700 | - | 9,359,700 |
| ຈ່າຍອາກອນເພີ່ມໃນປີ 2005 ແລະ 2011 (**) | - | - | - | | (2,463,858,865) | (2,463,858,865) |
| **ຍອດເຫຼືອນະວັນທີ 31 ທັນວາ 2012** | 244,666,100,000 | 391,685,038 | 550,517,242 | 1,270,379,683 | (73,075,799,289) | 197,474,840,674 |

(**) ໃນປີ 2012, ກົມສ່ວຍສາອາກອນກະຊວງການເງິນ ໄດ້ອອກແຈ້ງການ ເລກທີ 3383/MOF ກ່ຽວກັບການເກັບອາກອນຍ້ອນຫຼັງເພີ່ມຈຳນວນ 2,463,858,865 ກີບ ຕັ້ງແຕ່ປີ 2005 ຫາ ປີ 2011.

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນ (ຕໍ່)

ສຳລັບທ້າຍປີໃນວັນທີ 31 ທັນວາ 2012

| | |
|---|---|
| ທ່ານ ສອງຈະເລີນ ເຄນມີງມີງຄົນ | ທ່ານ ນາງ ວິໄລ ທິສະທວັດດີ |
| ຜູ້ອຳນວຍການໃຫຍ່ | ຮອງອຳນວຍການ |

ນະຄອນຫຼວງວຽງຈັນ, ສ ປປ ລາວ

31 ມີນາ 2013

## ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານກະແສເງິນສົດ

ສຳລັບທ້າຍປີວັນທີ 31 ທັນວາ 2012

| | *ເອກະສານ ຊ້ອນທ້າຍ* | *2012 ກີບ* | *2011 (ລາຍງານຄືນ) ກີບ* |
|---|---|---|---|
| **ກຳໄລ-ຂາດທຶນສຸດທິຫຼັງອາກອນ** | | 10,090,896,040 | (1,915,450,371) |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ | | 6,490,757,506 | 6,126,049,917 |
| ຄັງແຮສຳລັບຂາດທຶນທາງສິນເຊື່ອ | 13 | 20,824,445,880 | 9,524,987,778 |
| **ກະແສເງິນສົດຈາກກຳໄລຈາກການດຳເນີນງານ ກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນ** | | 8,115,261,419 | 13,890,351,264 |
| (ເພີ່ມຂື້ນ)/ຫລຸດລົງຂອງຊັບສິນຈາກການດຳເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | 7,000,000,000 | 26,080,091,066 |
| ເງິນກູ້ໃຫ້ລູກຄ້າ | | (42,661,545,862) | (36,989,935,911) |
| ຊັບສິນທາງການເງິນອື່ນໆ | | (2,000,000,000) | 29,607,926,000 |
| ລາຍຮັບດອກເບ້ຍຄ້າງຮັບ | | (530,234,327) | 416,348,274 |
| ຊັບສິນອື່ນໆ | | 3,283,073,753 | 19,739,490,766 |
| (ເພີ່ມຂື້ນ)/ຫລຸດລົງຂອງໜີ້ສິນຈາກການດຳເນີນງານ | | | |
| ເງິນຝາກ ແລະ ເງິນກູ້ຢືມຈາກທະນາຄານອື່ນ | | 602,914,808 | (3,700,709,243) |
| ເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ ຂອງລູກຄ້າ | | (15,914,979,991) | 35,659,699,180 |
| ອາກອນກຳໄລຖອກແລ້ວພາຍໃນປີ | 19 | (583,099,942) | (427,390,187) |
| ໜີ້ສິນອື່ນໆ | | (4,779,819,392) | (14,517,156,449) |
| **ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | (47,513,429,534) | 70,118,714,760 |
| **ການເຄື່ອນໄຫວທາງດ້ານການລົງທຶນ** | | | |
| ການຊື້ຊັບສິນບັດ ແລະ ອຸປະກອນ | | (10,461,576,594) | (12,195,576,099) |
| ການລົງທຶນໃນທຸລະກິດອື່ນ | | | |
| ສ່ວນແບ່ງດອກເບ້ຍ ແລະ ລາຍຮັບ | | 441,000,000 | 160,170,000 |
| **ກະແສເງິນສົດສຸດທິທີ່ໃຊ້ເຄື່ອນໄຫວການລົງທຶນ** | | (10,020,576,594) | (12,035,406,099) |

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານກະແສເງິນສົດ (ຕໍ່)

ສຳລັບທ້າຍປີວັນທີ 31 ທັນວາ 2012

| | | | |
|---|---|---|---|
| **ການເຄື່ອນໄຫວການເງິນ** | | | |
| ການເບີກຖອນຈາກເງິນກູ້ຢືມ | | | |
| ຈ່າຍຄືນໜີ້ສິນ | | | |
| ເພີ່ມທຶນພາຍໃນປີ | 20 | 159,960,000,000 | |
| **ກະແສເງິນສົດສຸດທິໃນການເຄື່ອນໄຫວການເງິນ** | | 159,960,000,000 | |
| ເພີ່ມຂຶ້ນ/(ຫຼຸດລົງສຸດທິ) ໃນເງິນສົດ ແລະ ທຽບເທົ່າເງິນສົດ | | 102,425,993,872 | 58,083,308,661 |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | | 151,999,251,654 | 94,714,979,989 |
| ຜົນກະທົບຈາກສ່ວນຜິດດ່ຽງຂອງການແລກປ່ຽນເງິນຕາ | | 21,139,879 | (799,036,996) |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | 21 | 254,446,385,405 | 151,999,251,654 |

ທ່ານ ທອງຈະເລີນ ເຄນມີງມີງຄົນ
ຜູ້ອຳນວຍການໃຫຍ່

ທ່ານ ນາງ ອິໄລ ທິສະຫວັດດີ
ຮອງອຳນວຍການ

ນະຄອນຫຼວງວຽງຈັນ, ສ ປປ ລາວ
31 ມີນາ 2013